ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ....469.../ບລຈ

ນະຄອນຫຼວງວຽງຈັນ, ວັນທີ....01 SEP 2026.....

ແຈ້ງການ

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທີ່ນັບຖືຢ່າງສູງ;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ທີ່ນັບຖືຢ່າງສູງ;
ບັນດາ ຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ທີ່ນັບຖືຢ່າງສູງ.

ເລື່ອງ: ແຜນການຈັດຕັ້ງປະຕິບັດການເປີດເຜີຍຂໍ້ມູນ ເອກະສານລາຍງານການເງິນ ປະຈຳ 6 ເດືອນ ຕົ້ນປີ 2026 ຂອງບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.

- ອີງຕາມ ແຈ້ງການກ່ຽວກັບການເປີດເຜີຍຂໍ້ມູນຕາມຮອບວຽນບັນຊີ ປະຈຳ 6 ເດືອນຕົ້ນປີ 2026 ຂອງ ບໍລິສັດຈົດທະບຽນ ໃນ ຕລຊລ ສະບັບເລກທີ 1062/ຕລຊລ, ລົງວັນທີ 10 ສິງຫາ 2026.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ໃນນາມເປັນບໍລິສັດຈົດທະບຽນ ຂໍຖືເປັນກຽດແຈ້ງມາຍັງ ທ່ານຊາບ ກ່ຽວກັບແຜນການຈັດຕັ້ງປະຕິບັດການເປີດເຜີຍຂໍ້ມູນ ເອກະສານລາຍງານການເງິນ ປະຈຳ 6 ເດືອນຕົ້ນປີ 2026 ຂອງ ບລຈ. ໃນປະຈຸບັນ, ເອກະສານລາຍງານການເງິນດັ່ງກ່າວ ແມ່ນຍັງຢູ່ໃນຂັ້ນຕອນການທົບທວນຄືນ ຂອງຜູ້ບໍລິຫານ ແລະ ຜູ້ກວດສອບພາຍນອກ, ຊຶ່ງມີບາງປະເດັນທີ່ຕິດພັນກັບສັນຍາເງິນກູ້ລະຫວ່າງ ບລຈ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ (ບໍລິສັດແມ່ຂອງບໍລິສັດວຽງຈັນ ເຊັນເຕີ ລາວ ມະຫາຊົນ). ສະນັ້ນ, ບລຈ ຈະຮີບຮ້ອນ ແລະ ເລັ່ງດຳເນີນການໃຫ້ສຳເລັດໂດຍໄວທີ່ສຸດ, ຊຶ່ງມີແຜນ ການຈັດຕັ້ງປະຕິບັດ ດັ່ງນີ້:

1. ເອກະສານລາຍງານການເງິນ ປະຈຳ 6 ເດືອນຕົ້ນປີ 2026 ຂອງ ບລຈ ທີ່ໄດ້ຮັບການທົບທວນ ຄາດວ່າຈະ ສຳເລັດ ຊ້າສຸດບໍ່ເກີນ ຕົ້ນເດືອນກັນຍາ ປີ 2026 ແລະ ຈະເປີດເຜີຍພາຍຫຼັງໄດ້ຮັບມະຕິຈາກກອງປະຊຸມ ສະພາບໍລິຫານ ບລຈ;
2. ການຈັດກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ III ແມ່ນຈະຈັດຂຶ້ນພາຍໃນເດືອນ ກັນຍາ 2026.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມສົມຄວນດ້ວຍ.

ຜູ້ອຳນວຍການ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທວາງ ເວີຍ

ຜູ້ປະສານງານ: ນາງ ມຸກດາວະດີ ມິ່ງບຸບຜາ
ເບີໂທຕິດຕໍ່: 020 2996 1995